

# ກອງປະຊຸມໃຫຍ່ ຄັ້ງທີ IV ຂອງໜ່ວຍຊາວໜຸ່ມຮາກຖານ ສາຂາ ທະນາຄານ ແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ




ໜ່ວຍຊາວໜຸ່ມ ສາຂາ ທະນາຄານ ແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ ໄດ້ເປີດກອງປະຊຸມໃຫຍ່ຄັ້ງທີ IV ຢ່າງເປັນທາງການ ໃນວັນທີ 03 ກໍລະກົດ 2019 ພາຍໃຕ້ການເປັນປະທານ ຂອງ ສະຫາຍ ອານຸສັກ ພົງສະຫວັດ ເລຂາໜ່ວຍຊາວໜຸ່ມຮາກຖານ ສາຂາ ທະນາຄານ ແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ ໂດຍໃຫ້ກຽດເຂົ້າຮ່ວມຂອງສະຫາຍ ນ. ທຸມມາ ປັນຍາສິດ ຮອງເລຂາ ຄະນະບໍລິຫານງານຊາວໜຸ່ມແຂວງອຸດົມໄຊ, ສະຫາຍ ບຸນໄທ ສຸພັດທອນ ເລຂາໜ່ວຍພັກ ສາຂາທະນາຄານ ແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ, ບັນດາແຂກເຊີນຈາກໜ່ວຍຊາວໜຸ່ມຂອງສາຂາທະນາຄານທຸລະກິດ, ສະຖາບັນການເງິນ, ໜ່ວຍຊາວໜຸ່ມພະແນກການອ້ອມຂ້າງແຂວງ ແລະ ສະ ມາຊິກຊາວໜຸ່ມພາຍໃນໜ່ວຍຮາກຖານ ສາຂາ ທະນາຄານ ແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ ທັງໝົດຈຳນວນ 59 ສະຫາຍ, ຍິງ 29 ສະຫາຍ.



ກອງປະຊຸມ ສະຫາຍ ອານຸສັກ ພົງສະຫວັດ ເລຂາໜ່ວຍຊາວໜຸ່ມຮາກຖານ ສາຂາ ທະນາຄານ ແຫ່ງ ສປປ ລາວ ພາກເໜືອແຂວງອຸດົມໄຊ ໄດ້ຜ່ານຮ່າງລາຍງານການເມືອງ ປະກອບມີ II ພາກຄື: ພາກທີ I ສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດໃນໄລຍະ 04 ປີ ຜ່ານມາ 2015-2018 ແລະ ພາກທີ II ວາງທິດທາງແຜນການ 2019-2024.

ກອງປະຊຸມໄດ້ເປັນເອກະພາບຮັບຮອງເອົາລາຍງານການເມືອງ ແລະ ທິດທາງແຜນການ ນັບແຕ່ປີ 2019-2024 ດ້ວຍຄວາມເອກະພາບ; ຈາກນັ້ນ ສະຫາຍ ແສງສະຫວັນ ມະນີເລີດ ຄະນະຈັດຕັ້ງພິທີ ກໍ່ໄດ້ຜ່ານຂໍ້ຕົກລົງຍັ້ງຢືນ ໜ່ວຍ 04 ບຸກ ປະຈຳປີ 2018, ໃບຍ້ອງຍໍບຸກຄົນ 04 ບຸກ ປະຈຳປີ 2018 ຂອງຄະນະບໍລິຫານງານຊາວໜຸ່ມແຂວງ ຈຳນວນ 40 ສະຫາຍ ຍິງ 20 ສະຫາຍ, ໃບຍ້ອງຍໍຄອບຄົວຕົວແບບປະຈຳປີ 2018 ຈຳນວນ 07 ຄອບຄົວ ແລະ ໃບຍ້ອງຍໍຜົນງານ 04 ບຸກ 03 ປີ ຕໍ່ເນື່ອງ ຂອງສູນກາງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຈຳນວນ 42 ສະຫາຍ ຍິງ 20 ສະຫາຍ ແລະ ມີຕາງໜ້າຂຶ້ນຮັບ ຕາມລຳດັບ.








ກອງປະຊຸມໄດ້ປ່ອນບັດຄັດເລືອກເອົາ ຄະນະໜ່ວຍຊາວໜຸ່ມຊຸດໃໝ່ ເຊິ່ງມີຜູ້ອອກສະໝັກຮັບເລືອກຕັ້ງທັງໝົດຈຳນວນ 07 ສະຫາຍ, ຍິງ 03 ສະຫາຍ ເລືອກເອົາ 05 ສະຫາຍ ຍິງ 02 ສະຫາຍ, ຕາງໜ້າສະມາຊິກພາຍໃນໜ່ວຍທັງໝົດ 43 ສະຫາຍ, ຍິງ 24 ສະຫາຍ, ກອງປະຊຸມຄັ້ງປະຖົມມະລຶກໄດ້ເລືອກເອົາ ສະຫາຍ ອານຸສັກ ພົງສະຫວັດ ເປັນເລຂາໜ່ວຍຊາວໜຸ່ມທະນາຄານ ສາຂາ ທະນາຄານ ແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ, ສະຫາຍ ນ. ເກສອນ ສຸທິວົງ ເປັນຮອງເລຂາ, ສະຫາຍ ແສງສະຫວັນ ມະນີເລີດ ເປັນຮອງເລຂາ, ສະຫາຍ ຄຳຫຼ້າ ສ້ອຍສຸວັນ ເປັນຄະນະ, ສະຫາຍ ນ. ມຸກດາ ພົມມະຈັນ ເປັນຄະນະ, ພ້ອມດຽວກັນນັ້ນ ກອງປະຊຸມຍັງໄດ້ເປັນເອກະພາບເລືອກເອົາປະທານກວດກາ ແລະ ຮອງປະທານກວດກາພາຍໃນໜ່ວຍທັງໝົດ ຈຳນວນ 03 ສະຫາຍ, ຍິງ 02 ສະຫາຍ ຄື: ສະຫາຍ ນ. ເກສອນ ສຸທິວົງ ເປັນປະທານກວດກາ, ສະຫາຍ ຄຳຫຼ້າ ສ້ອຍສຸວັນ ເປັນຮອງ ແລະ ສະຫາຍ ນ. ພອນຈັນ ໄຊຍະແສງ ເປັນຮອງ.

ຄະນະໜ່ວຍຊຸດໃໝ່ໄດ້ຂຶ້ນກ່າວຮັບໜ້າທີ່ ເພື່ອພ້ອມກັນຈັດຕັ້ງປະຕິບັດແຜນການນັບແຕ່ປີ 2019-2024 ໃຫ້ສຳເລັດຜົນເທື່ອລະກ້າວ, ນອກຈາກນັ້ນຍັງໄດ້ຮັບຄຳໂອວາດຈາກ ສະຫາຍ ນ. ທຸມມາ ປັນຍາສິດ ຮອງເລຂາຄະນະບໍລິຫານງານຊາວໜຸ່ມແຂວງອຸດົມໄຊ ເພື່ອນຳມາຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂະບວນການໃຫ້ສຳເລັດຜົນ ພ້ອມກັນສືບຕໍ່ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນວຽກງານຊາວໜຸ່ມ ແລະ ໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍຈາກຂັ້ນເທິງດ້ວຍຄວາມຮັບຜິດຊອບສູງ.

**# ຂ່າວໂດຍ: ເກສອນ ສຸທິວົງ**

**# ພາບໂດຍ: ພອນໄຊ ສີລາວົງ**